


# ການປະກອບ ສ່ວນຂອງ LXML ບໍ່ຄໍາ-ທອງ ເຊໂປນ ຕໍ່ ສປປ ລາວ

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万 象 矿 业 有 限 公 司
CHIFENG LXML SEPON



# ການປະກອບສ່ວນຂອງພວກເຮົາ ເປັນຕົວເລກ

| | |
|---|---|
| US$ 1,6 ຕື້ | ລາຍຮັບແກ່ ສປປ ລາວ ນັບຕັ້ງແຕ່ເລີ່ມດຳເນີນງານ |
| US$ 56 ລ້ານ | ເກັບກູ້ລະເບີດບໍ່ທັນແຕກ (60.000 ລູກ ແລະ 6.400 ເຮັກຕາ) |
| US$ 55 ລ້ານ | ປັບປຸງ ພື້ນຖານໂຄງລ່າງແຫ່ງຊາດ |
| US$ 50 ລ້ານ | ສ້າງລາຍຮັບແກ່ຊຸມຊົນ ຈາກການພັດທະນາທຸລະກິດທ້ອງຖິ່ນ |
| US$ 20 ລ້ານ | ແຜນງານພັດທະນາ ຊຸມຊົນ |
| US$ 20 ລ້ານ | ການຄຸ້ມຄອງ, ການຟື້ນຟູ ແລະ ຕິດຕາມ ສິ່ງແວດລ້ອມ |



ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ບໍ່ຄຳ-ທອງ ເຊໂປນ ໄດ້ປະກອບສ່ວນ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ກໍ່ມີຜົນປະໂຫຍດທາງອ້ອມ ຜ່ານການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການພັດທະນາທຸລະກິດທ້ອງຖິ່ນ ເຊິ່ງເປັນການປະກອບສ່ວນອັນມະຫາສານ ຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ໃນ ສປປ ລາວ.

ນັບແຕ່ປີ 2016 ຈົນເຖິງປັດຈຸບັນ LXML ໄດ້ເປັນບໍລິສັດບໍ່ແຮ່ໜຶ່ງດຽວໃນ ສປປ ລາວ ທີ່ໄດ້ຮັບກິດຕິມະສັກ ໃນລຳດັບຊັ້ນ A+ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍສາມາດ ຮັກສາຜົນງານ ແລະ ມາດຕະຖານທີ່ພົ້ນເດັ່ນສະເໝີມາ.

LXML ໄດ້ຮັບ ການຈັດອັນດັບອັນຊີງກຣດນີ້ ຍ້ອນມີການປະກອບສ່ວນຕໍ່ການພັດທະນາ ໂດຍມີການຮ່ວມມືກັບຊຸມຊົນເຈົ້າພາບ ແລະ ມີການຮັກສາມາດຕະຖານດ້ານການປົກປັກຮັກສາສິ່ງແວດລ້ອມໄດ້ຢ່າງເຂັ້ມງວດ.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລາງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ

LXML ບໍ່ຄຳ-ທອງ ເຊໂປນ ໄດ້ບັນລຸໝາກຜົນທີ່ດີ ໃນວຽກງານພັດທະນາຊຸມຊົນ ໂດຍການຮ່ວມມືກັບລັດຖະບານລາວ ແລະ ຊຸມຊົນທ້ອງຖິ່ນ ຢ່າງສະເໝີມາ. ຜົນງານເຫຼົ່ານີ້ ໄດ້ເປັນສິ່ງຂັບເຄື່ອນໃຫ້ເມືອງວິລະບູລີ ໃຫ້ຫລຸດພົ້ນຈາກສະຖານະເມືອງທີ່ທຸກຍາກທີ່ສຸດໄດ້ ໃນປີ 2015. ລາຍໄດ້ຕໍ່ຫົວຄົນຂອງປະຊາຊົນທ້ອງຖິ່ນເມືອງວິລະບູລີ ບັນລຸໄດ້ US$900ຄົນ/ປີ ເຊິ່ງເປັນການເພີ່ມຂຶ້ນ 50% ຕັ້ງແຕ່ປີ 2004.

ຍຸດທະສາດ ການພັດທະນາຊຸມຊົນ ຂອງ LXML ສຸມໃສ່ 4 ເສົາຫຼັກຄື: ສາທາລະນະສຸກຂອງຊຸມຊົນ, ການສຶກສາ ຂອງອະນຸຊົນ-ຄົນຮຸ່ນຫຼັງ, ການຄ້ຳປະ ກັນທາງດ້ານການຜະລິດສະບຽງອາຫານ ດ້ວຍການປະຕິບັດກະສິກຳແບບຍືນຍົງ; ແລະ ການປັບປຸງຊີວິດການເປັນຢູ່ ໃຫ້ແກ່ຊຸມຊົນທ້ອງຖິ່ນ.

ໂຄງການພັດທະນາຊຸມຊົນຂອງ LXML ແມ່ນແນໃສ່ຮັກສາຊີວິດການເປັນຢູ່ທີ່ໝັ້ນຄົງ ແລະ ຍືນຍົງ ໂດຍການຮ່ວມມືກັບຊຸມຊົນທ້ອງຖິ່ນ ເຊິ່ງຈະເປັນການປູພື້ນຖານອັນສຳຄັນ ເພື່ອບັນລຸເສດຖະກິດທີ່ເຂັ້ມແຂງພາຍຫຼັງທີ່ ບໍ່ຄຳ-ທອງ ເຊໂປນ ຫາກໄດ້ປິດລົງ. ມາຮອດປັດຈຸບັນ, LXML ໄດ້ປະກອບສ່ວນເຂົ້າໃສ່ໂຄງການພັດທະນາຊຸມຊົນແລພ ບັນດາຫົວໜ່ວຍທຸລະກິດ ຫຼາຍກວ່າ US$20 ລ້ານ.

# 1 ສາທາລະນະສຸກ-ປັບປຸງການບໍລິການ ພື້ນຖານ ດ້ານສາທາລະນະສຸກ ແລະ ສຸຂະພາບແມ່ ແລະ ເດັກ



I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລາງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ

**ການປັບປຸງສຸຂະພາບແມ່ ແລະ ເດັກ - ໂຄງການ ‘1000 ວັນ’**

ໂດຍການຮ່ວມມືກັບ ກະຊວງສາທາລະນະສຸກ, ສະຫະພັນແມ່ຍິງລາວ ແລະ UNICEF, LXML ບໍ່ຄຳ-ທອງ ເຊໂປນ ໄດ້ລົງທຶນປະມານ US$5 ລ້ານ ເຂົ້າໃນໂຄງການສຸຂະສຶກສາ ແລະ ປັບປຸງສຸຂະພາບແມ່ ແລະ ເດັກ ລວມທັງ ໂຄງການ ‘1000 ວັນ’ ແລະ ‘WASH’.

ໂຄງການ ‘1000 ວັນ’ ໄດ້ເຂົ້າເຖິງເດັກນ້ອຍ 250.000 ຄົນ, ແຈກຢາຍສານອາຫານແຮທາດ ຈຳນວນ 2,7 ລ້ານຊອງ ພ້ອມທັງໄດ້ຝຶກແອບອາສາສະໝັກ, ແພດຜະດຸງຄັນ ແລະ ສະມາຊິກສະຫະພັນແມ່ຍິງລາວ ຈຳນວນ 2.000 ຄົນ.

ນອກນັ້ນ, LXML ຍັງໄດ້ລົງທຶນ US$270.000 ຮ່ວມກັບ ສະຖາບັນເບີເນັດ ແມັກຟາເລນ ຂອງອົສຕຣາລີ (Australia’s MacFarlane Burnet Institute) ເຂົ້າໃນໂຄງການ**ສຸຂະພາບແມ່ ແລະ ເດັກ**ຢູ່ ເມືອງວິລະບູລີ ນຳອີກດ້ວຍ.

LXML ໄດ້ສະໜັບສະໜູນ **ກອງປະຊຸມເປີດກວ້າງໝໍເດັກນ້ອຍລາວ** ເຊິ່ງຈັດໂດຍອົງການ Health Frontiers ເປັນເວລາ 13 ປີ.

LXML ໄດ້ໃຫ້ການ**ສະໜັບສະໜູນດ້ານທຶນຮອນ** ແລະ **ອຸປະກອນການແພດ** ໃຫ້ແກ່ໂຮງໝໍເມືອງວິລະບູລີ, ສຸກສາລາຢູ່ເຂດຫ່າງໄກສອກຫຼີກ ພາຍໃນເມືອງວິລະບູລີ, ໂຮງໝໍແຂວງສະຫວັນນະເຂດ, ໂຮງໝໍມິດຕະພາບທີ່ນະຄອນຫຼວງວຽງຈັນ, ການກໍ່ສ້າງຫ້ອງຜູ້ປ່ວຍ ແລະ ຫ້ອງນ້ຳ, ການບໍລິຈາກຸລິດໂຮງໝໍ, ລະບົບນ້ຳປະປາ, ເຄື່ອງອົບເດັກອ່ອນ ແລະ ອຸປະກອນການແພດທີ່ສຳຄັນອື່ນໆ ເພື່ອສະໜັບສະໜູນເປົ້າໝາຍ ດ້ານສາທາລະນະສຸກຂັ້ນພື້ນຖານ ແລະ ເພື່ອຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລ່າງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# 2 ໂຄງການຊຸມຊົນເປັນເຈົ້າການ (ກອງທຶນພັດທະນາຊຸມຊົນ ແລະ ກອງທຶນພັດທະນາບ້ານ)

LXML ບໍ່ຄຳ-ທອງ ເຊໂປນ ສືບຕໍ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍຜ່ານການເຂົ້າເຖິງການບໍລິການພື້ນຖານ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ເພື່ອບັນລຸບູລິມະສິດການພັດທະນາຂອງເຂົາເຈົ້າ. ກຸ່ມເປົ້າໝາຍໂຄງການຂອງບໍລິສັດ ແມ່ນກຸ່ມຄອບຄົວຜູ້ດ້ອຍໂອກາດ.

ໂດຍການປຶກສາຫາລືຢ່າງໃກ້ຊິດກັບການນຳຂັ້ນຊຸມຊົນໃນ 72 ບ້ານອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ, LXML ໄດ້ລົງທຶນ US$15 ລ້ານ ເຂົ້າໃສ່ກອງທຶນພັດທະນາຊຸມຊົນໃນຂັ້ນເມືອງ ແລະ ຂັ້ນບ້ານ. LXML ໄດ້ປະກອບສ່ວນ US$3,4 ລ້ານ ໃສ່ກອງທຶນພັດທະນາບ້ານ (ປັດຈຸບັນປ່ຽນຊື່ມາເປັນ FADG ຫຼື ກອງທຶນຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດ) ແລະ US$11,7 ລ້ານ ໃສ່ກອງທຶນພັດທະນາຊຸມຊົນ ຕັ້ງແຕ່ປີ 2003 ເປັນຕົ້ນມາ, ເພື່ອສ້າງໂຮງຮຽນ, ເສັ້ນທາງ, ຫ້ອງນ້ຳ, ໜອງປາ, ລະບົບສະໜອງນ້ຳສະອາດ ແລະ ໂຄງການປັບປຸງຊີວິດການເປັນຢູ່ຂະໜາດນ້ອຍ ທີ່ຈະສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນຫຼາຍກວ່າ 40,000 ຄົນ.

**ກອງທຶນພັດທະນາຊຸມຊົນ** (TF) ຖືກອອກແບບຂຶ້ນມາເພື່ອປັບປຸງການສະໜອງການບໍລິການຂັ້ນພື້ນຖານ ແລະ ຫລຸດຜ່ອນຜົນກະທົບຂອງ ໂຄງການຄຳ-ທອງ ເຊໂປນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລັດຖະບານລາວ.

**ກອງທຶນພັດທະນາບ້ານ** (ຫຼື FADG) ສະໜອງທຶນຊ່ວຍເຫຼືອລ້າ ລະຫວ່າງ US$8.000 ເຖິງ US$16.000 ອີງຕາມຈຳນວນຄົວເຮືອນ. ໂດຍລວມແມ່ນໄດ້ຈັດຕັ້ງປະຕິບັດຫຼາຍກວ່າ 260 ໂຄງການໃນ 47 ຊຸມຊົນ ໂດຍການລົງທຶນທັງໝົດ US$3,4 ລ້ານ. ປະຊາຊົນພາຍ ໃນບ້ານຈະເປັນຜູ້ເລືອກໂຄງການເອງ ພ້ອມທັງປະກອບສ່ວນຢ່າງຕ່ຳ 10% ຂອງມູນຄ່າລວມຂອງໂຄງການ ບໍ່ວ່າຈະເປັນທຶນຮອນ, ເວລາ, ວັດຖຸ ແລະ ແຮງງານ ເພື່ອຊຸກຍູ້ຄວາມເປັນເຈົ້າການຂອງຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ.

LXML ໄດ້ສ້າງໂຄງການຊົນລະປະທານຂະໜາດນ້ອຍ ແລະ ໃຫຍ່ຈຳນວນໜຶ່ງ ເພື່ອສະໜອງນ້ຳຢ່າງສະໝ່ຳສະເໝີ ໃຫ້ແກ່ຊຸມຊົນທ້ອງຖິ່ນ ເພື່ອສະໜັບສະໜູນ ຄວາມໝັ້ນຄົງດ້ານສະບຽງອາຫານຢູ່ພາຍໃນເມືອງ ແລະ ອ້ອມຂ້າງ ເມືອງວິລະບູລີ.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລ່າງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ

# 3 ການສຶກສາ - ປັງປຸງການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາ

ໃນວັນທີ 22 ກັນຍາ 2022 ໂດຍການຮ່ວມມືກັບຫ້ອງການສຶກສາເມືອງວິລະບູລີ, LXML ໄດ້ມອບ 3 ຫ້ອງຮຽນ ແລະ ຫ້ອງນ້ຳ ໃນມູນຄ່າ US$36.950 ໃຫ້ແກ່ ໂຮງຮຽນພູຄຳ ຢູ່ບ້ານບຸງຄຳ.

ໃນວັນດຽວກັນ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງວິລະບູລີ ແລະ LXML ໄດ້ປິດໂຄງການສົ່ງເສີມສິລະປະດົນຕີພື້ນເມືອງ. LXML ໄດ້ສະໜັບສະໜູນດ້ານທຶນຮອນ ແລະ ອຸປະກອນ ໃຫ້ແກ່ນັກຮຽນເມືອງວິລະບູລີ ເພື່ອຮຽນຫຼິ້ນດົນຕີພື້ນເມືອງ. LXML ໄດ້ປະກອບສ່ວນ US$10.000 ເຂົ້າໃນໂຄງການອະນຸລັກສິລະປະວັດທະນະທຳລາວນີ້ ເຊິ່ງສ້າງໂອກາດອັນດີໃຫ້ແກ່ ນັກດົນຕີລາວໜຸ່ມນ້ອຍ 30 ຄົນ.

LXML ໄດ້ສະໜອງທຶນການສຶກສາໃຫ້ແກ່ພະນັກງານຄົນລາວ ໄປສຶກສາຕໍ່ຢູ່ປະເທດ ອົສຕຣາລີ ແລະ ໄທ ພ້ອມທັງໄດ້ສະໜັບສະໜູນທຶນຮອນໃຫ້ແກ່ ນັກຮຽນລາວທີ່ດ້ອຍໂອກາດຈາກເມືອງວິລະບູລີ ໃຫ້ມາສຶກສາຢູ່ ນະຄອນຫຼວງວຽງຈັນ. ນອກນີ້, ບໍລິສັດຍັງໄດ້ສະໜອງໂຄງການຝຶກອົບຮົມ ແລະ ຝຶກນາຍຊ່າງສຳລັບຄົນທ້ອງຖິ່ນ ເພື່ອປັບປຸງຄວາມອາດສາມາດທ້ອງຖິ່ນ. ບໍລິສັດມີສາຍພົວພັນທີ່ຍາວນານກັບ ວິທະຍາໄລເຕັກນິກສະຫວັນນະເຂດ ເພື່ອສະໜອງການຝຶກອົບຮົມດ້ານກົນຈັກ ແລະ ວິສະວະກຳໄຟຟ້າ ເຊິ່ງເປັນທັກສະທີ່ສາມາດຖ່າຍທອດແລ້ວນຳໄປໃຊ້ຢູ່ບໍລິສັດອື່ນໆ ໄດ້.

ນັບຕັ້ງແຕ່ປີ 2003, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ເພື່ອສ້າງ ແລະ ບຳລຸງຮັກສາສູນຝຶກອົບຮົມຫ້ວຍກົງ ຢູ່ເມືອງວິລະບູລີ. LXML ໄດ້ກໍ່ສ້າງສູນຫ້ວຍກົງທີ່ຕັ້ງຢູ່ແຄມອ່າງນ້ຳຂະໜາດໃຫຍ່ ເພື່ອເປັນຊົນລະປະທານໃຫ້ແກ່ຊາວນາທ້ອງຖິ່ນ ແລະ ສະໜອງນ້ຳສະອາດໃຫ້ແກ່ປະຊາຊົນທ້ອງຖິ່ນ. ສູນຝຶກອົບຮົມຫ້ວຍກົງ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ສະມາຊິກຊຸມຊົນທ້ອງຖິ່ນ ກ່ຽວກັບກະສິກຳ (ການປູກເຫັດ, ການປະມົງ, ການປູກໝາກກ້ຽງ), ການຕັດຫຍິບ, ເສດຖະກິດກຸ່ມຕົວເອງ, ການລ້ຽງມ້ອນ-ທໍໄໝ ແລະ ຫຼັກສູດວິຊາສະເພາະອື່ນໆ ທີ່ຕອບສະໜອງຄວາມຕ້ອງການຂອງທ້ອງຖິ່ນ.



I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລາງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# 4 ການສ້າງລາຍໄດ້

ການພັດທະນາກຸ່ມທຸລະກິດທ້ອງຖິ່ນຂອງ LXML ແນໃສ່ປັບປຸງແຫຼ່ງລາຍໄດ້ທ້ອງຖິ່ນໃຫ້ມີຄວາມຫຼາກຫຼາຍ, ສ້າງສະພາບແວດລ້ອມໃຫ້ທຸລະກິດໃໝ່ໆຂະຫຍາຍຕົວ ແລະ ຊ່ວຍສ້າງຊີວິດການເປັນຢູ່ທີ່ຍືນຍົງ ໂດຍເລັ່ງໃສ່ພາຍຫຼັງບໍ່ຄຳ-ທອງ ເຊໂປນປິດລົງ.

ໃນແຕ່ລະປີ, LXML ໄດ້ຊື້ສິນຄ້າທ້ອງຖິ່ນຢ່າງຕ່ຳ US$3 ລ້ານ (75% ຂອງໝາກໄມ້, ຜັກ ແລະ ຜົນຜະລິດທ້ອງຖິ່ນ) ຜ່ານ 50 ຫົວໜ່ວຍທຸລະກິດທ້ອງຖິ່ນ - ເຊິ່ງໄດ້ສ້າງລາຍໄດ້ໃຫ້ແກ່ທຸລະກິດທ້ອງຖິ່ນລວມທັງໝົດຫຼາຍກວ່າ US$50 ລ້ານ-ກໍຄື **ສ້າງລາຍໄດ້ໃຫ້ແກ່ປະຊາຊົນທ້ອງຖິ່ນ.**

ໂດຍການຮ່ວມມືກັບອົງການພັດທະນາຂອງເນເທີແລນ ຫຼື Netherlands Development Organization (SNV), LXML ໄດ້ເພີ່ມ**ລາຍໄດ້ໃຫ້ແກ່ຊາວກະສິກອນຂະໜາດນ້ອຍ** ກວ່າ 1.900 ຄົນ ຈາກຜົນຜະລິດເຂົ້າທີ່ມີປະລິມານ ແລະ ຄຸນນະພາບດີຂຶ້ນ ດ້ວຍວິທີການປູກຝັງທີ່ປັບປຸງດີຂຶ້ນ. ກ່ອນໂຄງການ, ຊາວນາສາມາດຜະລິດເຂົ້າ 2,2 ໂຕນ/ເຮັກຕາ ແລ້ວ ຫຼັງຈາກໂຄງການຜົນຜະລິດໄດ້ເພີ່ມຂຶ້ນ 3,5 ໂຕນ/ເຮັກຕາ, ເຊິ່ງໄດ້ເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ສຳລັບເມືອງວິລະບູລີ. LXML ໄດ້ສະໜອງ US$757.000 ເພື່ອສະໜັບສະໜູນໂຄງການໄລຍະ 3 ປີນີ້.

LXML ໄດ້ລົງທຶນປະມານ US$1 ລ້ານ ເພື່ອພັດທະນາອຸດສາຫະກຳປູກໝາກກ້ຽງຢູ່ເມືອງວິລະບູລີ ຜ່ານບໍລິສັດໄອຣອນບາກ (Ironbark) ຂອງອົສຕຣາລີ ເຊິ່ງມີປະສົບການ 20 ປີໃນການສົ່ງອອກໝາກກ້ຽງ. ໂດຍການສະໜັບສະໜູນດ້ານວິຊາການ, 48 ຄອບຄົວໄດ້ປູກຕົ້ນໝາກກ້ຽງ 26.000 ຕົ້ນ ໃນເນື້ອທີ່ 43 ເຮັກຕາ. ໃນປີ 2022, ຜົນຜະລິດໝາກກ້ຽງຢູ່ເມືອງວິລະບູລີ ໄດ້ທະລຸ 400 ໂຕນ ຕໍ່ປີ. LXML ໄດ້ສະໜອງຊົນລະປະທານ ແລະ ການສະໜັບສະໜູນອື່ນໆເພື່ອເພີ່ມຜົນຜະລິດ.

**ໂຄງການປັບປຸງການເຂົ້າເຖິງສິນເຊື່ອ ແລະ ບໍລິການເງິນຝາກ (ການເຂົ້າເຖິງແຫຼ່ງທຶນເຂດຊົນນະບົດ).**

ໂດຍການຮ່ວມມືກັບອົງການ GIZ ແລະ AusAid ຕັ້ງແຕ່ປີ 2012, LXML ໄດ້ສ້າງສິ່ງອຳນວຍຄວາມສະດວກໃນການບໍລິການ ການເງິນຈຸລະພາກເພື່ອກະສິກຳ ໂດຍສະໜັບສະໜູນ 55 ບ້ານຢູ່ເມືອງ ວິລະບູລີ ແລະ ເມືອງເຊໂປນ ໂດຍມີສະມາຊິກ 5.929 ຄົນ ທີ່ລວມເງິນຝາກ US$2.452.546 ແລະ ສິນເຊື່ອ US$1.476.860.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລາງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# 5 ການເຄົາລົບນັບຖືມໍຣະດົກດ້ານວັດທະນະທຳ

ເມືອງວິລະບູລີ ເປັນທີ່ຂະໜານນາມໃນລະດັບໂລກ ວ່າເປັນໜຶ່ງໃນສະຖານທີ່ຂຸດຄົ້ນບໍ່ແຮ່ ແລະ ໂລຫະກິດແຫ່ງທຳອິດໃນ ພາກພື້ນອາຊີຕາເວັນອອກສ່ຽງໃຕ້. ການຂຸດຄົ້ນບໍ່ແຮ່ໃນສະໄໝບູຮານ ໄດ້ສືບຕໍ່ໃນສະຖານທີ່ນີ້ຈົນເຖິງປະມານ 1.300 ປີກ່ອນ (ຫຼື ໃນປະມານປີ ຄສ 700), ເຊິ່ງມີການຂຸດຄົ້ນ ແລະ ປຸງແຕ່ງແຮ່ທອງ ທີ່ມີຢ່າງອຸດົມສົມບູນຢູ່ໃນຈຸດ “ເປີ້ນເບົ້າຫຼໍ່” ແລະ “ທົ່ງນາເງືອກ”.

ຕັ້ງແຕ່ປີ 2008, LXML ໄດ້ລົງທຶນຫຼາຍກວ່າ US$1,8 ລ້ານ ເພື່ອອະນຸລັກ 3.000 ປີ ແຫ່ງປະຫວັດສາດລາວ ຜ່ານໂຄງການບູຮານວິທະຍາໜຶ່ງດຽວໃນ ສປປ ລາວ ກໍຄືໃນໂລກໂດຍການຮ່ວມມືກັບ ກົມມໍລະດົກ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລ James Cook ຂອງອົສຕຣາລີ.

ຄະນະໂຄງການໄດ້ເຊີນຊ່ຽວຊານຄົ້ນຄ້ວາຕ່າງປະເທດ ລວມທັງຈາກບັນດາມະຫາວິທະຍາໄລຂອງ ສປ ຈີນ ແລະ ພາກລັດຖະບານຈາກແຂວງຢູໜານ ແລະ ຍີ່ປຸ່ນ. ຫຼັກຖານຂອງໄມ້ຄ້ຳບູຮານ ແລະ ແຜ່ນທອງທີ່ຄ້າຂາຍໃນທົ່ວພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການພັດທະນາບໍ່ແຮ່ ແລະ ເປັນປະຕູ ທີ່ສະແດງໃຫ້ເຫັນເຖິງຄວາມສີວິໄລໃນສະໄໝບູຮານ.

ໂຄງການອະນຸລັກມໍລະດົກໂລກຂອງ LXML ເຕົ້າໂຮມທີມງານຄົ້ນຄວ້າທີ່ຫຼາກຫຼາຍ ໃນຂັ້ນທ້ອງຖິ່ນ, ປະເທດ ແລະ ສາກົນ. ອາສາສະໝັກ, ປະຊາຊົນທ້ອງຖິ່ນ, ນັກຮຽນ, ນັກບູຮານວິທະຍາ ແລະ ເຈົ້າໜ້າທີ່ລາວ ຮ່ວມມືກັນຢ່າງໃກ້ຊິດ ເພື່ອດຳເນີນການຄົ້ນຄ້ວາ ແລະ ອະນຸລັກວັດຖຸທີ່ເປັນມໍຣະດົກແຫ່ງຊາດ.

ວັດຖຸບູຮານທີ່ຄົ້ນພົບ ຜ່ານແຜນງານອະນຸລັກມໍຣະດົກດ້ານວັດທະນະທຳຂອງ LXML ໄດ້ນຳໄປສະແດງຢູ່ ຫໍພິພິດຕະພັນແຫ່ງຊາດລາວ ທີ່ນະຄອນຫຼວງວຽງຈັນ, ຫໍພິພິດຕະພັນສະຫວັນນະເຂດ ແລະ ຫໍວັດທະນະທຳເມືອງວິລະບູລີ. LXML ໄດ້ມອບວັດຖຸບູຮານດ້ານວັດທະນະທຳສຳຄັນຫຼາຍກວ່າ 8.000 ອັນ ໃຫ້ແກ່ລັດຖະບານລາວ.

ວັດຖຸບູຮານເຫຼົ່ານີ້ປະກອບດ້ວຍອຸປະກອນ ທີ່ນຳໃຊ້ໃນການຂຸດຄົ້ນບໍ່ແຮ່ເປັນຕົ້ນ ຂັ້ນໄດໄມ້ກົມ ແລະ ລູກໝາກລໍ້-ລອກ, ໄມ້ຄ້ຳ, ກະຕ່າໄມ້ໄຜ່ ແລະ ເຊືອກຫວາຍ; ຄ້ອງບ້າງທອງສຳລິດ (ທອງເຫຼືອງ) ຈາກຍຸກທອງເຫຼືອງ (ວາງສະແດງຢູ່ຫໍພິພິດຕະພັນແຫ່ງຊາດ); ກ້ອນທອງ, ເຄື່ອງປັ້ນດິນເຜົາ, ກະດິ່ງທອງສຳລິດ, ເຄື່ອງປະດັບ, ເຄື່ອງໃຊ້ໃນພິທີກຳເສັ່ນໄຫວ້ ແລະ ວັດຖຸບູຮານອື່ນໆ ເຊິ່ງຊີ້ໃຫ້ເຫັນວ່າ ປະເທດລາວໃນອາດີດ ເປັນສະຖານທີ່ປະຫວັດສາດ ແລະ ການຄ້າທີ່ສຳຄັນຍິ່ງໃນ ພາກພື້ນແຫ່ງນີ້.

ເພື່ອອະນຸລັກຮີດຄອງປະເພນີ ແລະ ງານພື້ນເມືອງຂອງຊຸມຊົນ, ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ສະໜັບສະໜູນການຫຼອມ ຮູບຫຼໍ່ຂອງພະເຈົ້າອົງຕື້ ອຸຕະມະໂຊກ (ກວ້າງ 3ມ, ສູງ 4,20ມ) ແລະ ຮູບປັ້ນອີກ 5 ຮູບ (ພະຄູ ຂີ້ຫອມ) ໂດຍລວມມູນຄ່າລົງທຶນປະມານ US$103.000.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລ່າງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# II ການສະໜັບສະໜູນໂຄງລ່າງພື້ນຖານ

ນັບຕັ້ງແຕ່ເລີ່ມການດຳເນີນງານແຕ່ປີ 2003, LXML ໄດ້ລົງທຶນຫຼາຍກວ່າ US$55 ລ້ານ ໃສ່ການປັບປຸງໂຄງລ່າງພື້ນຖານ.

LXML ໄດ້ລົງທຶນປະມານ US$34 ລ້ານ ເພື່ອສ້າງຕາຂ່າຍໄຟຟ້າແຫ່ງຊາດ ຈາກ ເມືອງທ່າແຂກ ຫາ ເມືອງມະຫາໄຊ ໂດຍການຮ່ວມມືກັບ ລັດວິສາຫະກິດໄຟຟ້າລາວ ອັນໄດ້ຂະຫຍາຍການພັດທະນາສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.

LXML ໄດ້ລົງທຶນ US$20 ລ້ານ ເພື່ອສ້າງ ແລະ ບຳລຸງຮັກສາເສັ້ນທາງທ້ອງຖິ່ນ. ໃນປັດຈຸບັນ, ທຸກໆບ້ານຢູ່ເມືອງວິລະບູລີ ແມ່ນມີເສັ້ນທາງເຂົ້າເຖິງ.

ໃນປີ 2022, LXML ໄດ້ບໍລິຈາກ US$5 ລ້ານ ໃຫ້ແກ່ແຂວງສະຫວັນນະເຂດ ເພື່ອປັບປຸງ-ຍົກລະດັບເສັ້ນທາງ 28A, ໂດຍການປູຢາງສອງຊັ້ນ ມີຄວາມຍາວ 41,56 ກິໂລແມັດ ແຕ່ບ້ານນາບໍ່ ຫາ ເທດສະບານເມືອງວິລະບູລີ ແຂວງສະຫວັນນະເຂດ, ເຊິ່ງເປັນທີ່ຕັ້ງຂອງ ບໍ່ຄຳ-ທອງ ເຊໂປນ. ໂຄງການນີ້ຈະປັບປຸງການເຂົ້າເຖິງຕະຫຼາດໃຫ້ແກ່ປະຊາຊົນທ້ອງຖິ່ນກວ່າ 40.000 ຄົນ.

ເສັ້ນທາງ 28A ເປັນເສັ້ນທາງເຊື່ອມຕໍ່ທີ່ສຳຄັນໃນ ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ໂດຍເຊື່ອມໂຍງຕິດຈອດ ສປປ ລາວ ກັບ ສສ ຫວຽດນາມ ແລະ ໄທ ກໍຄື ເປີດທາງສູ່ເຂດຊົນນະບົດໃຫ້ມີການຜະລິດກະສິກຳ ແລະ ເສດຖະກິດອື່ນໆ.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງລາງພື້ນຖານ
III. ການເກັບກູ້ລະເບີດບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML
V. ການພັດທະນາຊັບພະຍາກອນມະນຸດ



# III ການເກັບກູ້ລະເບີດບໍ່ທັນແຕກ

LXML ໄດ້ລົງທຶນ US$56 ລ້ານ ໃນວຽກງານເກັບກູ້ລະເບີດບໍ່ທັນແຕກ (UXO).

ບໍ່ຄຳ-ທອງ ເຊໂປນ ຕັ້ງຢູ່ເຂດຫ່າງໄກສອກຫຼີກ ຢູ່ເມືອງໜຶ່ງທີ່ຖືກຖິ້ມລະເບີດລົງຫຼາຍທີ່ສຸດ ໃນ ສປປ ລາວ ເຊິ່ງໄດ້ນຳຄວາມທ້າທາຍທີ່ພິເສດສະເພາະ ໃຫ້ແກ່ວຽກງານຂຸດຄົ້ນບໍ່ແຮ່ ແລະ ການຜະລິດກະສິກຳ. ມີລະເບີດ 260 ລ້ານລູກ ທີ່ຖືກຖິ້ມລົງໃສ່ ສປປ ລາວ ໃນລະຫວ່າງປີ 1964 ເຖິງ 1973. ໃນນັ້ນ, 80 ລ້ານລູກຍັງບໍ່ທັນແຕກ, ອັນໄດ້ປະຖິ້ມຮ່ອງຮອຍແຫ່ງຄວາມສູນເສຍອັນຍິ່ງໃຫຍ່ໄວ້ໃນແຜ່ນດິນລາວ. UXO ສືບຕໍ່ທຳລາຍຊີວິດ ແລະ ເປັນຕົ້ນເຫດການບາດເຈັບຫຼາຍກໍລະນີໃນແຕ່ລະປີ.

ນັບແຕ່ເລີ່ມດຳເນີນງານມາ, LXML ໄດ້ເກັບກູ້ລະເບີດບໍ່ທັນແຕກ 60.000 ລູກ ພາຍໃນ ເນື້ອທີ່ 6.400 ເຮັກຕາ ພາຍໃນ ແລະ ອ້ອມຂ້າງບໍ່ຄຳ-ທອງ ເຊໂປນ. LXML ຮ່ວມມືກັບ ກະຊວງປ້ອງກັນປະເທດ, ອົງການ UXO Lao, ແລະ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ ຫຼື National Regulatory Authority (NRA) ເພື່ອສ້າງຄວາມອາດສາມາດ ແລະ ປັບປຸງວິທີການເກັບກູ້ລະເບີດໃຫ້ແກ່ ນັກວິຊາການລາວ ເພື່ອຄົນຮຸ່ນຕໍ່ໄປ.

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ
II. ການສະໜັບສະໜູນໂຄງ ລາງພື້ນຖານ
III. ການເກັບກູ້ລະເບີດ ບໍ່ທັນແຕກ
IV. ການປົກປັກຮັກສາ ແລະ ຄຸ້ມຄອງ ສິ່ງແວດລ້ອມຂອງ LXML
V. ການພັດທະນາ ຊັບພະຍາກອນມະນຸດ



ຢູ່ LXML, ຍາມໃດພວກເຮົາກໍຫຼຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ປະຕິບັດຕາມລະບຽບມາດຕະຖານສາກົນ ກໍຄື ທ້ອງຖິ່ນ.

ມາດຕະຖານດ້ານສິ່ງແວດລ້ອມຂອງ LXML ເປັນທີ່ຮັບຮູ້ ວ່າເປັນແບບຢ່າງທີ່ດີເລີດຢູ່ໃນ ສປປ ລາວ. ມາຮອດປັດຈຸບັນ, LXML ໄດ້ລົງທຶນ US$20 ລ້ານ ໃນການຄຸ້ມຄອງ, ຟື້ນຟູ ແລະ ຕິດຕາມກິດຈະກຳດ້ານສິ່ງແວດລ້ອມ.

LXML ເປັນໜຶ່ງໃນບໍລິສັດທຳອິດຢູ່ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ທີ່ໄດ້ ຮັບການຢັ້ງຢືນສາກົນ ISO 14001 ສຳລັບລະບົບການຄຸ້ມຄອງດ້ານສິ່ງແວດລ້ອມ.

# IV ການປົກປັກຮັກສາ ແລະ ຄຸ້ມຄອງ ສິ່ງແວດລ້ອມ

## ຄວາມໝາຍໝັ້ນຕໍ່ສິ່ງແວດລ້ອມຂອງພວກເຮົາ, ເປັນຕົວເລກ:

- **US$20**ລ້ານ ໃນການຄຸ້ມຄອງ, ຟື້ນຟູ ແລະ ຕິດຕາມ ສິ່ງແວດລ້ອມ
- **750** ຕົວຢ່າງ ນ້ຳ ຕໍ່ເດືອນ ຫຼື ເທົ່າກັບ 171,000 **ຕົວຢ່າງ** ໄດ້ຖືກເກັບມາວິເຄາະ ຕັ້ງແຕ່ປີ 2003
- **452** ເຮັກຕາ ເນື້ອທີ່ດິນ ທີ່ມີການປູກພືດຄືນໃໝ່
- **US$300**k ພັນ ທີ່ໃຊ້ຈ່າຍໃນການປູກພືດຄືນໃໝ່ຕໍ່ປີ
- **450,000** ຕົ້ນໄມ້ ທີ່ປູກສຳເລັດ
- **US$1**ລ້ານ ເຂົ້າໃນການສຶກສາ ແລະ ອະນຸລັກຊີວະນາໆພັນ

I. ການພັດທະນາຊຸມຊົນ ຂອງ LXML ບໍ່ຄຳ-ທອງ ເຊໂປນ | II. ການສະໜັບສະໜູນໂຄງລາງພື້ນຖານ | III. ການເກັບກູ້ລະເບີດບໍ່ທັນແຕກ | IV. ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຂອງ LXML | V. ການພັດທະນາຊັບພະຍາກອນມະນຸດ

ຕະຫຼອດອາຍຸການ ຂອງບໍ່ຄຳ-ທອງ ເຊໂປນ, ມີພະນັກງານກວ່າ10.000 ຄົນທີ່ໄດ້ປະກອບສ່ວນຕໍ່ການເຕີບໃຫຍ່ ຂອງ LXML ເຊໂປນ, ໄດ້ຮຽນຮູ້ຝຶກຝົນທັກສະວິຊາຊີບ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນ. ໃນຈຳນວນພະນັກງານ ແລະ ຜູ້ຮັບເໝົາທັງໝົດປະມານ 5.000 ຄົນ, 95% ແມ່ນຄົນລາວ, 75% ແມ່ນຄົນທ້ອງຖິ່ນ ແລະ 25% ແມ່ນແມ່ຍິງ.

LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ເຂົ້າໃສ່ການພັດທະນາຊັບພະຍາກອນມະນຸດ ລວມທັງທຶນການສຶກສາ, ການລົງຝຶກງານກັບບໍລິສັດ, ແລະ ການຝຶກອົບຮົມຕົວຈິງ.

LXML ສືບຕໍ່ສະໜັບສະໜູນຄວາມກ້າວໜ້າໃນອາຊີບການງານ ແລະ ຄວາມມຸ່ງໝັ້ນຂອງພະນັກງານ ເພື່ອສ້າງວິຊາການມືອາຊີບຄົນລາວ ເພື່ອຜົນປະໂຫຍດຂອງ ສປປ ລາວ.

ທັກສະ ແລະ ປະສົບການທີ່ພະນັກງານເກັບກ່ຽວໄດ້ໃນຊຸມປີຜ່ານມາ ແມ່ນມີຄຸນຄ່າຍິ່ງ. ທັກສະເຫຼົ່ານີ້ຈະເປັນ ຊັບສິນ-ມໍລະດົກຕິດໂຕພະນັກງານທຸກຄົນບໍ່ວ່າພວກເຂົາເຈົ້າຈະໄປເຮັດວຽກຢູ່ແຫ່ງໃດໃນ ສປປ ລາວ ກໍຕາມ. LXML ຈະສືບຕໍ່ລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ ຂອງ ສປປ ລາວ ຜ່ານການຝຶກອົບຮົມ, ການຝຶກສອນໃນໜ້າວຽກ ແລະ ຄວາມກ້າວໃນໃນອາຊີບການງານ.

# V ການພັດທະນາຊັບພະຍາກອນມະນຸດ



## ການພັດທະນາຊັບພະຍາກອນມະນຸດຂອງ LXML ເປັນຕົວເລກ:

- **US$4 ລ້ານ** ທີ່ເປັນທຶນການສຶກສາຊັ້ນສູງຢູ່ຕ່າງປະເທດ ໃຫ້ແກ່ພະນັກງານຄົນລາວ ໄປສຶກສາຢູ່ ອົສຕຣາລີ, ນິວຊີແລນ ແລະ ໄທ ຕັ້ງແຕ່ປີ 2002.
- **100 ກວ່າຄົນໄດ້ຮັບການຝຶກອົບຮົມ** ໃນຂະແໜງເຕັກນິກ ແລະ ບໍລິຫານ ຕັ້ງແຕ່ປີ 2000.
- **1.000 ກວ່າຄົນ** ທີ່ເປັນພະນັກງານ ໄດ້ເຂົ້າຮ່ວມແຜນງານຝຶກອົບຮົມ ຕາມຄວາມອາດສາມາດ ຜ່ານການຝຶກສອນໃນໜ້າວຽກ, ການຝຶກອົບຮົມເປັນລະບົບ, ການຝຶກອົບຮົມຕົວຈິງໃນໜ້າວຽກ ເພື່ອພັດທະນາສີມືທັກສະໃນອຸດສາຫະກຳບໍ່ແຮ່.
- **33.000 ຄົນ ທີ່ໄດ້ຮັບການຝຶກອົບຮົມ** ພາຍໃນ ແລະ ພາຍນອກບໍລິສັດ ສະເລ່ຍ 46.139 ຊົ່ວໂມງຝຶກອົບຮົມ/ປີ. ມາຮອດປັດຈຸບັນ LXML ໄດ້ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານລາວກວ່າ 959.744 ຊົ່ວໂມງ.
- **27 ຄົນ ທີ່ເປັນຄູຝຶກພາຍໃນ** ຂອງບໍລິສັດ ປະຈຳຢູ່ພາກສະໜາມ.
- **54 ຄົນ** ທີ່ເປັນນັກສຶກສາຝຶກສີມືແຮງງານ ຢູ່ວິທະ ຍາໄລເຕັກນິກລາວ-ເຢຍລະມັນ ແຕ່ປີ 2022 - 2027. ໃນນັ້ນ, ມີ 16 ຄົນທີ່ໄດ້ສຳເລັດຫຼັກສູດ ແລະ ມາເຮັດ ວຽກກັບ LXML ໃນປີ 2019.
- **304 ຄົນ** ທີ່ເຄີຍເປັນນັກສຶກສາຝຶກງານ ແລ້ວມາເຮັດວຽກກັບ LXML.
- **US$682.000** ລົງທຶນໃສ່ການສະໜັບສະໜູນຂະແໜງໄຟຟ້າ, ສະໜອງເຄື່ອງມື ແລະ ການຝຶກອົບຮົມຕ່າງໆ ໃຫ້ແກ່ ວິທະຍາໄລເຕັກນິກ ແລະ ວິຊາຊີບສະຫວັນນະເຂດຕັ້ງແຕ່ປີ 2006.
- **280 ກວ່າຄົນ** ທີ່ເປັນພະນັກງານຄົນລາວ ໃນຕຳແໜ່ງຫົວໜ້າສາຍງານ ແລະ ຫົວໜ້າຄຸມງານ.

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万 象 矿 业 有 限 公 司
CHIFENG LXML SEPON


**ຫ້ອງການ LXML ນະຄອນຫຼວງວຽງຈັນ**

ຖະໜົນ ບູຣີຈັນ, ບ້ານ ໂພນສີນວນ,
ເມືອງ ສີສັດຕະນາກ, ຕູ້ ປນ. 4486
ນະຄອນຫຼວງວຽງຈັນ, ສປປ ລາວ

T: +856 21 268 226

F: +856 21 268 201

**ຫ້ອງການ LXML ສະຫວັນນະເຂດ**

ຖະໜົນສັນຕິພາບ, ບ້ານ ນາເລົາ, ນະຄອນໄກສອນ
ພົມວິຫານ, ຕູ ປນ. 13, ແຂວງ ສະຫວັນນະເຂດ,
ສປປ ລາວ

T: +856 41 216 686

F: +856 41 213 616

**ຫ້ອງການ LXML ພາກສະໜາມ ເຊໂປນ**

ເມືອງ ວິລະບູລີ, ແຂວງ ສະຫວັນນະເຂດ, ສປປ ລາວ

E: lxml.information@lxml.la

W: www.lxml.la


